ສົ່ງ: ທ່ານ ຫົວໜ້າສຳນັກງານ ຄຄຊ "ເພື່ອຊາບ".

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

-----===000===-----

ທະນາຄານແຫ່ງ ສປປ ລາວ

ເລກທີ 05 /ທຫລ

ນະຄອນຫຼວງວຽງຈັນ, ວັນທີ 28 APR 2016

ສຳນັກງານ ຄຄຊ
ວັນທີ 29 APR 2016
ໂທລະສັບ 021 217770

**ບົດສະຫຼຸບການເຄື່ອນໄຫວວຽກງານຂອງທະນາຄານແຫ່ງ ສປປ ລາວ ປະຈຳເດືອນ 03/2016 ແລະ ທິດທາງແຜນການໃນຕໍ່ໜ້າ**

## ພາກທີ I
## ການເຄື່ອນໄຫວວຽກງານທະນາຄານໃນໄລຍະຜ່ານມາ

### I. ວຽກງານການເມືອງແນວຄິດ

ສະພາບການເມືອງແນວຄິດຂອງພະນັກງານພາຍໃນຂະແໜງທະນາຄານມີຄວາມສະຫງົບປົກກະຕິ, ພະນັກງານມີຄວາມອຸ່ນອ່ຽນທຸ່ນທ່ຽງ, ເຊື່ອໝັ້ນຕໍ່ການນຳພາຂອງພັກ-ລັດ, ມີສະຕິເຄົາລົບຕໍ່ການຈັດຕັ້ງ, ລະບຽບກົດໝາຍ ແລະ ຕັ້ງໜ້າປະຕິບັດໜ້າທີ່ວຽກງານຕາມທີ່ໄດ້ຮັບມອບໝາຍຢ່າງຕັ້ງໜ້າ ແລະ ເຂັ້ມງວດ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກເປັນຢ່າງດີ.

### II. ວຽກງານພົ້ນເດັ່ນ

1. ສຳເລັດການອອກໃບອະນຸຍາດສ້າງຕັ້ງໃຫ້ແກ່ທະນາຄານ ມາເລຍັນ ເບີຫັດ ສາຂາໜອງດ້ວງ, ທະນາຄານ ໄຊງ່ອນເທືອງຕິ່ນ ລາວ ຈຳກັດ ສາຂາຈຳປາສັກ ແລະ ສາຂານະຄອນຫຼວງວຽງຈັນ; ສຳເລັດການມອບໃບອະນຸຍາດດຳເນີນທຸລະກິດຖາວອນ ໃຫ້ແກ່ສະຖາບັນການເງິນຈຸລະພາກທີ່ບໍ່ຮັບຝາກເງິນ ແມ່ຂອງ, ມອບໃບອະນຸຍາດດຳເນີນທຸລະກິດຖາວອນໃຫ້ແກ່ ສະຖາບັນການເງິນຈຸລະພາກທີ່ບໍ່ຮັບຝາກເງິນ ບໍລິສັດ ຄິມທາມ ເຊົ່າສິນເຊື່ອ ຈຳກັດ ແລະ ສະຖາບັນການເງິນຈຸລະພາກທີ່ບໍ່ຮັບຝາກເງິນ ສະຫວັນຄຳ;

2. ສຳເລັດການອອກຂໍ້ຕົກລົງຮັບຮອງເອົາລະບຽບວ່າດ້ວຍການດຳເນີນຕະຫຼາດ (Market Operation Regulation), ອອກຂໍ້ຕົກລົງວ່າດ້ວຍ ການດັດແກ້ບາງເນື້ອໃນມາດຕາ 5 ຂອງລະບຽບກ່ຽວກັບການຖອກທຶນຈົດທະບຽນ ແລະ ນຳໃຊ້ທຶນຈົດທະບຽນຂອງສະຖາບັນການເງິນ (ສະບັບເລກທີ 01/ທຫລ, ລົງວັນທີ 23/10/2012);

3. ອອກໃບຢັ້ງຢືນເງິນປອມໃຫ້ ທະນາຄານທຸລະກິດ, ປກສ ນະຄອນຫຼວງວຽງຈັນ ແລະ ປກສ ເມືອງໄຊທານີ ພາກສ່ວນລະ 1 ໃບ ລວມມີເງິນປອມປະເພດໃບ 50.000 ກີບ ຈຳນວນ 200 ໃບ, ປະເພດໃບ 100 ໂດລາ 23 ໃບ, ເງິນປອມປະເພດໃບ 50.000 ກີບ ຈຳນວນ 199 ໃບ ປກສ ນະຄອນຫຼວງວຽງຈັນ ໄດ້ນຳໄປປະກອບສຳນວນຄະດີ ແລະ ຈຳນວນທີ່ເຫຼືອ 24 ໃບ ແມ່ນໄດ້ເກັບຮັກສາໄວ້ຢູ່ທະນາຄານແຫ່ງ ສປປ ລາວ;

4. ວຽກງານຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ: ❶. ສຳເລັດການລົງຕິດຕາມ ແລະ ຊຸກຍູ້ກ່ຽວກັບວຽກງານຕ້ານ ແລະ ສະກັດກັ້ນການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຢູ່ທະນາຄານທຸລະກິດ 3 ແຫ່ງ, ສະຖາບັນການເງິນ 3 ແຫ່ງ; ❷. ສຳເລັດການປຶກສາຫາລືຮ່ວມກັບກົມພາສີ, ກະຊວງການເງິນ ກ່ຽວກັບການແຈ້ງເງິນສົດ, ວັດຖຸມີຄ່າ ໃນເວລາເຂົ້າ-ອອກ ສປປ ລາວ; ❸ສຳເລັດການລົງນາມເຊັນ MOU ກັບ

ກົມຕໍາຫຼວດຄຸ້ມຄອງຄົນຕ່າງປະເທດ, ກົມໃຫຍ່ສັນຕິບານ, ກະຊວງປ້ອງກັນຄວາມສະຫງົບ. ໃນເດືອນ 2/2016 ໄດ້ຮັບສໍານວນທຸລະກໍາທີ່ໜ້າສົງໄສວ່າເປັນການຟອກເງິນ (STR) ຈໍານວນ 8 ສະບັບ. ປັດຈຸບັນ STR ລວມທັງໝົດ 298 ສະບັບ;

5. ສໍາເລັດການກວດກາໃບລາຍງານຖານະການເງິນ ຂອງທະນາຄານທຸລະກິດ ປະຈໍາເດືອນ 2/2016 ທີ່ໄດ້ຮັບເອກະສານທຽບກັບລະບົບໂປຣແກຣມ ເຫັນວ່າຖືກຕ້ອງຕາມຫຼັກການບັນຊີ;

6. ສໍາເລັດການແຈ້ງຫາກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ, ກະຊວງອຸດສາຫະກໍາ ແລະ ການຄ້າ ກ່ຽວກັບບໍລິສັດ ອາຊຽນເຜດ ຈໍາກັດ ທີ່ບໍ່ໄດ້ຮັບອະນຸຍາດເຄື່ອນໄຫວດໍາເນີນທຸລະກິດຈາກ ທຫລ;

## III. ວຽກງານວິຊາສະເພາະ

### 1. ສະພາບເສດຖະກິດເງິນຕາສາກົນ

ເສດຖະກິດໂລກໂດຍລວມແມ່ນຂະຫຍາຍຕົວຊ້າ ເຮັດໃຫ້ບັນດາທະນາຄານກາງປະເທດຕ່າງໆ ນໍາໃຊ້ນະໂຍບາຍແບບຜ່ອນຄາຍ ຄື: ❶ທະນາຄານກາງແຫ່ງສະຫະພາບເອີຣົບ (ECB) ໄດ້ປັບຫຼຸດອັດຕາດອກເບ້ຍນະໂຍບາຍ ຈາກ -0,3% ມາເປັນ -0,4%. ພ້ອມນັ້ນໄດ້ອັດສີດເງິນ (QE) ເພີ່ມຈາກ 60 ຕື້ເອີໂຣ/ເດືອນ ມາເປັນ 80 ຕື້ເອີໂຣ/ເດືອນ ແລະ ຂະຫຍາຍການຮັບຊື້ຊັບສິນ ຕະຫຼອດຮອດຮຸ້ນກູ້ນອກກຸ່ມສະຖາບັນການເງິນ. ສິ່ງຜົນເຮັດໃຫ້ເງິນເອີໂຣ ອ່ອນຄ່າ 3% ໃນວັນທີ 10/3/2016 ແລະ ❷ສປ. ຈີນ ສືບຕໍ່ອັດສີດເງິນເຂົ້າສູ່ລະບົບ ຈໍານວນ 2 ຄັ້ງ ເປັນເງິນ 263 ຕື້ຢວນ (40,2 ຕື້ໂດລາສະຫະລັດ)[1] ປັບຫຼຸດອັດຕາເງິນແຮຝາກບັງຄັບ (RRR) ລົງ 0,5% ຢູ່ໃນລະດັບ 17% ຊຶ່ງມີຜົນນໍາໃຊ້ໃນວັນທີ 1/3/2016 ເພື່ອເພີ່ມສະພາບຄ່ອງໃນຕະຫຼາດການເງິນ ແລະ ກະຕຸ້ນເສດຖະກິດ. ນອກຈາກນີ້, ບໍລິສັດຈັດອັນດັບຄວາມໜ້າເຊື່ອຖືທາງການເງິນ (Moody's) ໄດ້ປັບຄວາມໜ້າເຊື່ອຖືຂອງ ສປ. ຈີນ ລົງເນື່ອງຈາກຖານະການເງິນຂອງລັດຖະບານ ສປ. ຈີນ ຫຼຸດລົງ ແລະ ຄວາມບໍ່ແນ່ນອນກ່ຽວກັບການປະຕິຮູບເສດຖະກິດ ລວມທັງໜີ້ສິນຂອງລັດຖະບານທີ່ຍັງສູງຂຶ້ນ ແລະ ຄັງສໍາຮອງເງິນຕາຕ່າງປະເທດ ຫຼຸດລົງ 208 ຕື້ໂດລາສະຫະລັດ ເຮັດໃຫ້ເງິນຢວນສືບຕໍ່ອ່ອນຄ່າ.

ສະພາບອັດຕາແລກປ່ຽນສາກົນ ເຫັນວ່າ: ເງິນໂດລາສະຫະລັດອ່ອນຄ່າ 0,41% ທຽບກັບເງິນເອີໂຣ ແລະ ບາງສະກຸນເງິນໃນພາກພື້ນອາຊີ ຍ້ອນຕົວເລກດຸນການຄ້າຂອງ ສ. ອາເມລິກາ ຂາດດຸນເພີ່ມຂຶ້ນ 2,2% ເປັນຂາດດຸນ 45,68 ຕື້ໂດລາສະຫະລັດ ໃນເດືອນ 1/2016;

ລາຄານໍ້າມັນໃນຕະຫຼາດໂລກ ເພີ່ມຂຶ້ນ 10,33% ມາເປັນ 35,44 ໂດລາ/ບາເຣວ ຍ້ອນຕົວເລກການຜະລິດນໍ້າມັນດິບ ໃນເດືອນ 2/2016 ຂອງກຸ່ມ OPEC ຫຼຸດລົງ 0,28 ລ້ານບາເຣວ/ວັນ ເປັນ 32,37 ລ້ານບາເຣວ/ວັນ ບວກກັບບໍລິສັດທີ່ປຶກສາທາງດ້ານພະລັງງານຂອງ ສປ. ຈີນ ຄາດຄະເນປະລິມານການນໍາເຂົ້ານໍ້າມັນດິບ ຈະເພີ່ມຂຶ້ນ 0,86 ລ້ານບາເຣວ/ວັນ ເປັນ 7,57 ລ້ານບາເຣວ/ວັນ ໃນປີ 2016 ທຽບໃສ່ປີຜ່ານມາ ແລະ ການຊົມໃຊ້ນໍ້າມັນຂອງ ສປ. ຈີນ ໃນປີ 2016 ທຽບປີຜ່ານມາ ຈະເພີ່ມຂຶ້ນ 0,41 ລ້ານບາເຣວ/ວັນ ເປັນ 11,51 ລ້ານບາເຣວ/ວັນ. ສໍາລັບລາຄາຄໍາ ເພີ່ມຂຶ້ນ ເປັນ 1.232,89 ໂດລາ/ອອນ ພາຍຫຼັງກອງທຶນຄໍາລາຍໃຫຍ່ຂອງໂລກ (SPDR) ເຂົ້າຊື້ຄໍາເພີ່ມຂຶ້ນ 14,87 ລ້ານອອນ ເປັນ 777,27 ລ້ານອອນ ໃນວັນທີ 29/2/2016.

[1] ເພື່ອເພີ່ມສະພາບຄ່ອງໃນຊ່ວງວັນທີ 29/1-19/2/2016 ໃນນັ້ນ, ແມ່ນຊື້ຂາຍຝາກ ໄລຍະ 14 ວັນ ອັດຕາດອກເບ້ຍ 2,4% ຈໍານວນ 50 ຕື້ຢວນ ແລະ ໄລຍະ 28 ວັນ ໃນອັດຕາດອກເບ້ຍ 2,6% ຈໍານວນ 50 ຕື້ຢວນ ແລະ ໃນວັນທີ 19/2/2016 ໄດ້ອັດສີດເງິນເພີ່ມ ຈໍານວນ 163 ຕື້ຢວນ (25 ຕື້ໂດລາສະຫະລັດ).

2. <u>ການຮັກສາສະຖຽນລະພາບເງິນຕາແຫ່ງຊາດ</u>

ທະນາຄານແຫ່ງ ສປປ ລາວ ໄດ້ສືບຕໍ່ປະຕິບັດນະໂຍບາຍເງິນຕາຂອງຕົນດ້ວຍຄວາມລະມັດລະວັງ ເພື່ອຮັກສາສະຖຽນລະພາບເສດຖະກິດມະຫາພາກດ້ານເງິນຕາ ໃຫ້ໄດ້ຕາມຄາດໝາຍທີ່ກຳນົດໄວ້. ໂດຍສາມາດຄວບຄຸມປະລິມານເງິນ, ອັດຕາເງິນເຟີ້ ແລະ ອັດຕາແລກປ່ຽນ ໃຫ້ຢູ່ໃນລະດັບທີ່ເໝາະສົມ ລາຍລະອຽດດັ່ງລຸ່ມນີ້:

- ອັດຕາເງິນເຟີ້ປະຈຳເດືອນ 03/2016 (ຕົວເລກຄາດຄະເນ) ຢູ່ໃນລະດັບ 1,09% ຫຼຸດລົງ 0,23% ຈາກ 1,32% ໃນເດືອນ 02/2016;
- ຖານເງິນຕາປະຈຳເດືອນ 03/2016 ເພີ່ມຂຶ້ນ 1.021,49 ຕື້ກີບ ຫຼື 3,30% ທຽບໃສ່ເດືອນ 02/2016, ເມື່ອທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 4.925,54 ຕື້ກີບ ຫຼື 18,24%. ສາເຫດຕົ້ນຕໍຍ້ອນ ທຫລ ລ່ວງໜ້າໃຫ້ລັດຖະບານ ປະມານ 1.500 ຕື້ກີບ ຈຳນວນ 716,88 ຕື້ກີບ ແລະ ທະນາຄານທຸລະກິດ ຮັບເງິນໂອນຈາກຕ່າງປະເທດສຸດທິ 64,32 ລ້ານໂດລາສະຫະລັດ. ເຖິງແມ່ນວ່າ ທະນາຄານທຸລະກິດ ຖອນເງິນຝາກເປັນເງິນສົດອອກນຳໃຊ້ ສຸດທິ 51,06 ລ້ານໂດລາສະຫະລັດ. ປະລິມານເງິນ M2 ເພີ່ມຂຶ້ນ 561,08 ຕື້ກີບ ຫຼື 0,90% ທຽບໃສ່ເດືອນ 02/2016, ເມື່ອທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 7.366,16 ຕື້ກີບ ຫຼື 13,23%;
- ສະພາບອັດຕາແລກປ່ຽນສະເລ່ຍໃນເດືອນ 03/2016 ເຫັນວ່າໝັ້ນຄົງໃນຂອບທີ່ກຳນົດໄວ້ ເຫັນໄດ້ຈາກເງິນກີບແຂງຄ່າ 0,25% ທຽບເງິນໂດລາສະຫະລັດ ແຕ່ອ່ອນຄ່າ 0,60% ທຽບເງິນບາດ. ສ່ວນຕ່າງລະຫວ່າງອັດຕາທະນາຄານທຸລະກິດ ກັບອັດຕາຕະຫຼາດຫຍັບເຂົ້າຫາກັນທັງສອງສະກຸນເງິນ ຄື: ຈາກ 0,41% ເປັນ 0,34% ສຳລັບກີບທຽບໂດລາສະຫະລັດ ແລະ ຈາກ 0,07% ເປັນ 0,06% ສຳລັບກີບທຽບບາດ. ຖ້າສົມທຽບໃສ່ທ້າຍປີຜ່ານມາເຫັນວ່າເງິນກີບແຂງຄ່າ 0,47% ທຽບກັບເງິນໂດລາສະຫະລັດ ແຕ່ອ່ອນຄ່າ 0,61% ທຽບເງິນບາດ;
- ການຊື້-ຂາຍເງິນຕາຕ່າງປະເທດໂດຍລວມ ໃນເດືອນນີ້ ແຕ່ວັນທີ (12/02-11/03/2016) ເຫັນວ່າມູນຄ່າການຊື້-ຂາຍ ເງິນຕາຕ່າງປະເທດ ຫຼຸດລົງ 106,54% ຍ້ອນປະລິມານຄວາມຕ້ອງການ ແລະ ການສະໜອງເງິນຕາຕ່າງປະເທດ ຫຼຸດລົງ ເຫັນໄດ້ຈາກທະນາຄານທຸລະກິດ ຂາຍສຸດທິ 595,38 ລ້ານໂດລາສະຫະລັດທຽບເທົ່າ, ໃນນັ້ນ ຂາຍເງິນບາດ 16.885,73 ລ້ານບາດ ຫຼື 465,83 ລ້ານໂດລາສະຫະລັດທຽບເທົ່າ ແລະ ຂາຍໂດລາສະຫະລັດສຸດທິ 129,55 ລ້ານໂດລາສະຫະລັດ. ທະນາຄານແຫ່ງ ສປປ ລາວ ຂາຍເງິນຕາຕ່າງປະເທດໃຫ້ທະນາຄານທຸລະກິດ ສຸດທິ 55,19 ລ້ານໂດລາສະຫະລັດທຽບເທົ່າ, ໃນນັ້ນ ຂາຍໂດລາສະຫະລັດ ສຸດທິ 59,65 ລ້ານໂດລາສະຫະລັດ ແຕ່ຊື້ເງິນບາດສຸດທິ 161,84 ລ້ານບາດ ຫຼື ທຽບເທົ່າ 4,46 ລ້ານໂດລາສະຫະລັດທຽບເທົ່າ;
- ດຸນການຊຳລະກັບຕ່າງປະເທດຜ່ານ ITRS ປະຈຳເດືອນ 03/2016 (13/02/2016-11/03/2016) ໄດ້ມີກະແສເງິນໄຫຼເຂົ້າຜ່ານລະບົບທະນາຄານ ສຸດທິ ຈຳນວນ 41,66 ລ້ານໂດລາສະຫະລັດ. ໃນນັ້ນ, ກະແສເງິນໄຫຼເຂົ້າ ຈຳນວນ 862,31 ລ້ານໂດລາສະຫະລັດ ຊຶ່ງມາຈາກການລົງທຶນໂດຍກົງຈາກຕ່າງປະເທດ 26,87 ລ້ານໂດລາສະຫະລັດ, ເງິນກູ້ຢືມຈາກຕ່າງປະເທດຂອງພາກລັດຖະບານ ຈຳນວນ 22,04 ລ້ານໂດລາສະຫະລັດ ແລະ ທະນາຄານທຸລະກິດ ຈຳນວນ 529,58 ລ້ານໂດລາສະຫະລັດ. ສ່ວນກະແສເງິນໄຫຼອອກ ມີ 820,65 ລ້ານໂດລາສະຫະລັດ. ຊຶ່ງມາຈາກການຊຳລະເງິນກູ້ຂອງທະນາຄານທຸລະກິດ 455,78 ລ້ານໂດລາສະຫະລັດ.

3. <u>ການລະດົມເງິນຝາກ, ການປ່ອຍສິນເຊື່ອ ແລະ ແກ້ໄຂໜີ້ບໍ່ເກີດດອກອອກຜົນຂອງທະນາຄານທຸລະກິດ</u>

ການລະດົມເງິນຝາກຮອດວັນທີ 15/03/2016 (ຕົວເລກເບື້ອງຕົ້ນ) ທະນາຄານທຸລະກິດມີຍອດເງິນຝາກທັງໝົດ 53.744,93 ຕື້ກີບ, ເມື່ອທຽບໃສ່ເດືອນຜ່ານມາ ເພີ່ມຂຶ້ນ 0,10%. ເງິນຝາກເປັນເງິນກີບ ເພີ່ມຂຶ້ນ 1,86% ເມື່ອ

ທຽບໃສ່ເດືອນຜ່ານມາ ຊຶ່ງກວມເອົາ 51,75% ຂອງຍອດເງິນຝາກທັງໝົດ ແລະ ເງິນຝາກເປັນເງິນຕາຕ່າງປະເທດ ຫຼຸດລົງ 1,72% ຊຶ່ງກວມເອົາ 48,25% ຂອງເງິນຝາກທັງໝົດ;

ການປ່ອຍສິນເຊື່ອຮອດວັນທີ 15/03/2016 (ຕົວເລກເບື້ອງຕົ້ນ) ຍອດເຫຼືອສິນເຊື່ອທັງໝົດ 48.355,03 ຕື້ກີບ ເພີ່ມຂຶ້ນ 0,56% ເມື່ອທຽບໃສ່ເດືອນຜ່ານມາ. ໃນນັ້ນ, ສິນເຊື່ອເປັນເງິນກີບ ກວມເອົາ 48,72% ຂອງສິນເຊື່ອທັງໝົດ ແລະ ສິນເຊື່ອເປັນເງິນຕາຕ່າງປະເທດ ກວມເອົາ 51,28% ຂອງສິນເຊື່ອທັງໝົດ;

ໃນເດືອນ 03/2016 ທະນາຄານນະໂຍບາຍ ປ່ອຍສິນເຊື່ອທັງໝົດ 9,96 ຕື້ກີບ ທຽບໃສ່ເດືອນຜ່ານມາ ເພີ່ມຂຶ້ນ 349,09% (ໃນເດືອນ 02/2016 ປ່ອຍສິນເຊື່ອ ຈຳນວນ 2,22 ຕື້ກີບ). ເກັບຄືນທຶນໄດ້ 33,46 ຕື້ກີບ. ສິນເຊື່ອທັງໝົດທີ່ປ່ອຍໄປສ່ວນໃຫຍ່ແມ່ນໄດ້ສຸມໃສ່ຂະແໜງກະສິກຳ-ປ່າໄມ້, ການຄ້າ ແລະ ປະກອບວັດຖຸເຕັກນິກ. ຍອດສິນເຊື່ອຮອດທ້າຍເດືອນ 03/2016 ມີຈຳນວນ 2.613,02 ຕື້ກີບ. ໃນນີ້, ສິນເຊື່ອຢູ່ເມືອງເປົ້າໝາຍ 1.689,62 ຕື້ກີບ, ຈຸດສຸມລັດຖະບານ-ທ້ອງຖິ່ນ 225,40 ຕື້ກີບ, ບ້ານເຣັດທົດລອງ 3 ສ້າງ 258,05 ຕື້ກີບ ແລະ ໂຄງການຜະລິດເປັນສິນຄ້າ 439,95 ຕື້ກີບ. ໃນນີ້: ໜີ້ NPL ມີຈຳນວນ 690,71 ຕື້ກີບ ກວມເອົາ 26,43% ຂອງຍອດສິນເຊື່ອທັງໝົດ.

ຍອດເຫຼືອໜີ້ຕ້ອງຮັບທວງຍາກ[1] (NPL) ຂອງທະນາຄານທຸລະກິດທົ່ວລະບົບ (ບໍ່ລວມທະນາຄານນະໂຍບາຍ) ຮອດເດືອນ 02/2015 ມີຈຳນວນ 2.615,91 ຕື້ກີບ ເພີ່ມຂຶ້ນ 1,66% ເມື່ອທຽບໃສ່ປີຜ່ານມາ ຊຶ່ງກວມເອົາ 4,29% ຂອງຍອດເຫຼືອສິນເຊື່ອທັງໝົດ.

## 4. ການເຄື່ອນໄຫວຊຳລະສະສາງ ແລະ ການຊື້-ຂາຍພັນທະບັດ

### 4.1. ການເຄື່ອນໄຫວຊຳລະສະສາງ

ການຊຳລະສະສາງດ້ວຍແຊັກຜ່ານສູນຊຳລະສະສາງໃນເດືອນນີ້ມີຈຳນວນ 3.568 ສະບັບ ເພີ່ມຂຶ້ນ 1,25% ເປັນເງິນຈຳນວນ 3.054,37 ຕື້ກີບ ເພີ່ມຂຶ້ນ 20,67% ເມື່ອທຽບໃສ່ເດືອນຜ່ານມາ. ການໂອນເງິນທາງໂທລະສານແບບມີມູນຄ່າສູງໃນເດືອນນີ້ມີຈຳນວນ 101 ຄັ້ງ ມີມູນຄ່າການໂອນ 515,24 ຕື້ກີບ ຫຼຸດລົງ 6,50% ເມື່ອທຽບໃສ່ເດືອນຜ່ານມາ.

ຕິດຕາມການໂອນເງິນຜ່ານລະບົບຊຳລະສະສາງມູນຄ່າສູງ (RTGS) ແຕ່ວັນທີ 25/02/2016-24/03/2016 ມີການເຄື່ອນໄຫວຈຳນວນ 9.103 ຄັ້ງ ລາຍລະອຽດມີ ດັ່ງນີ້:

- **ສະກຸນເງິນກີບ:** ມີການເຄື່ອນໄຫວ 9.053 ຄັ້ງ ມີມູນຄ່າການໂອນ 1.844,44 ຕື້ກີບ ຫຼຸດລົງ 41,65% ເມື່ອທຽບໃສ່ເດືອນຜ່ານມາ. ໃນນີ້, ທະນາຄານ ສົ່ງເສີມກະສິກຳ ເຮັດທຸລະກຳຫຼາຍກວ່າໝູ່ ຈຳນວນ 2.275 ຄັ້ງ ຈາກທະນາຄານທີ່ເຮັດທຸລະກຳທັງໝົດ 37 ທະນາຄານ, 1 ຕະຫຼາດຫຼັກຊັບ ແລະ Bconnex;
- **ກະຊວງການເງິນ:** ມີການເຄື່ອນໄຫວ ຈຳນວນ 45 ຄັ້ງ ມີມູນຄ່າ 310,30 ຕື້ກີບ ຫຼຸດລົງ 3,5% ທຽບໃສ່ເດືອນຜ່ານມາ;
- **ສະກຸນເງິນໂດລາສະຫະລັດ:** ມີການເຄື່ອນໄຫວ ຈຳນວນ 4 ຄັ້ງ ມີມູນຄ່າ 16.200 ໂດລາສະຫະລັດ;
- **ສະກຸນເງິນບາດ:** ມີການເຄື່ອນໄຫວ ຈຳນວນ 1 ຄັ້ງ ມີມູນຄ່າ 119.245.200 ບາດ.

### 4.2 ການຊື້-ຂາຍພັນທະບັດ

ພາຍໃນເດືອນ 03/2016 ພັນທະບັດກະຊວງການເງິນບ້ວງສະສົມທຶນ (ທະນາຄານແຫ່ງ ສປປ ລາວ ບໍ່ຄ້ຳປະກັນ) ມີການຈຳໜ່າຍ ຈຳນວນ 63 ຕື້ກີບ. ປັດຈຸບັນພັນທະບັດກະຊວງການເງິນ ມີທັງໝົດ 3 ບ້ວງ ຊຶ່ງມີຍອດເຫຼືອ 6.013,80 ຕື້ກີບ ແລະ 90 ລ້ານໂດລາສະຫະລັດ (ບ້ວງລະດົມທຶນຈາກທະນາຄານທຸລະກິດ ໂດຍກົງ ຈຳນວນ 554 ຕື້ກີບ ແລະ 90

[1] ເດືອນ 02/2016 ຍັງບໍ່ສາມາດລາຍງານໄດ້ ເນື່ອງຈາກລະບົບເກັບກຳຂໍ້ມູນຍັງເກັບກຳຂໍ້ມູນໄດ້ບໍ່ຄົບຖ້ວນ;

ລ້ານໂດລາ, ບ້ວງລ້າງໜີ້ 3.566,80 ຕື້ກີບ, ບ້ວງລະດົມທຶນຈາກທະນາຄານທຸລະກິດ ປະມູນຜ່ານທະນາຄານແຫ່ງ ສປປ ລາວ ຈຳນວນ 1.893 ຕື້ກີບ).

ສຳລັບພັນທະບັດທະນາຄານແຫ່ງ ສປປ ລາວ ໃນເດືອນ 03/2016 ມີການຈຳໜ່າຍໃຫ້ທະນາຄານທຸລະກິດ ຈຳນວນ 100 ລ້ານໂດລາສະຫະລັດ. ປັດຈຸບັນຍັງມີຍອດເຫຼືອພັນທະບັດທີ່ຍັງບໍ່ທັນມີການໄຖ່ຖອນ ຈຳນວນ 354 ລ້ານໂດລາສະຫະລັດ. ພາຍໃນເດືອນນີ້ ມີການຈ່າຍດອກເບ້ຍໃຫ້ທະນາຄານທຸລະກິດ ຈຳນວນ 1,23 ລ້ານໂດລາສະຫະລັດ.

## 5. ການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ

- ດັດຊະນີຕະຫຼາດຫຼັກຊັບລາວ ໃນເດືອນນີ້ ປິດຢູ່ທີ່ 1.163,18 ຈຸດ ຫຼຸດລົງ 0,69% ເມື່ອທຽບໃສ່ເດືອນຜ່ານມາ ຕະຫຼອດເດືອນມີປະລິມານຊື້-ຂາຍຮຸ້ນທັງໝົດ 1,10 ລ້ານຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 4,89 ຕື້ກີບ ຫຼຸດລົງ 84,22% ທຽບໃສ່ເດືອນຜ່ານມາ. ໂດຍເດືອນນີ້ມີຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍ ກວມເອົາ 55,47% ຂອງມູນຄ່າການຊື້-ຂາຍທັງໝົດ.
- ຮຸ້ນຂອງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (BCEL) ມີລາຄາຊື້-ຂາຍສະເລ່ຍ 4.304 ກີບ/ຮຸ້ນ ຫຼຸດລົງ 116 ກີບ/ຮຸ້ນ ເມື່ອທຽບໃສ່ເດືອນທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 978.700 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 4,21 ຕື້ກີບ ເພີ່ມຂຶ້ນ 82,18% ເມື່ອທຽບໃສ່ເດືອນຜ່ານມາ. ໂດຍເດືອນນີ້ຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍ ກວມເອົາ 49,32% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ BCEL ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນຢູ່ທີ່ 9,48%[2].
- ຮຸ້ນຂອງບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ (EDL-Gen) ມີລາຄາຊື້-ຂາຍສະເລ່ຍ 5.867 ກີບ/ຮຸ້ນ ຫຼຸດລົງ 32 ກີບ/ຮຸ້ນ ເມື່ອທຽບໃສ່ເດືອນທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 107.700 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 631,85 ລ້ານກີບ ຫຼຸດລົງ 97,70% ເມື່ອທຽບໃສ່ເດືອນຜ່ານມາ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດສະເລ່ຍ ກວມເອົາ 48,86% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ EDL-Gen ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 13,83%[3].
- ຮຸ້ນຂອງບໍລິສັດ ລາວເວີນ ມະຫາຊົນ (LWPC) ມີລາຄາຊື້-ຂາຍສະເລ່ຍ 6.475 ກີບ/ຮຸ້ນ ຫຼຸດລົງ 825 ກີບ/ຮຸ້ນ ເມື່ອທຽບໃສ່ເດືອນທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 200 ຮຸ້ນ ແລະ ມີມູນຄ່າຊື້-ຂາຍ 1,29 ລ້ານກີບ ເພີ່ມຂຶ້ນ 77,40% ທຽບໃສ່ເດືອນຜ່ານມາ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດສະເລ່ຍ ກວມເອົາ 25% ຂອງມູນຄ່າຊື້-ຂາຍຂອງຮຸ້ນ LWPC ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 2,77%[4].
- ຮຸ້ນຂອງບໍລິສັດ ປີໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ (PTL) ມີລາຄາຊື້-ຂາຍສະເລ່ຍ 2.875 ກີບ/ຮຸ້ນ ຫຼຸດລົງ 1 ກີບ/ຮຸ້ນ ເມື່ອທຽບໃສ່ເດືອນທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 1.000 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 2,87 ລ້ານກີບ ຫຼຸດລົງ 99,67% ທຽບໃສ່ເດືອນຜ່ານມາ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດສະເລ່ຍ ກວມເອົາ 41,67% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ PTL ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 12,66%[5].
- ຮຸ້ນຂອງບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ (SVN) ມີລາຄາຊື້-ຂາຍສະເລ່ຍ 3.400 ກີບ/ຮຸ້ນ ເພີ່ມຂຶ້ນ 53 ກີບ/ຮຸ້ນ ມີປະລິມານການຊື້-ຂາຍທັງໝົດ 14.200 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 48,28 ລ້ານກີບ. ໂດຍເປັນການຊື້-

---

[2] ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດ ສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 10%;

[3] ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດ ສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 25%;

[4] ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກຳນົດ;

[5] ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກຳນົດ;

ຂາຍຂອງຜູ້ລົງທຶນຕ່າງປະເທດ ສະເລ່ຍກວມເອົາ 24,36% ຂອງມູນຄ່າການຊື້-ຂາຍຮຸ້ນ SVN ທັງໝົດ. ສັດສ່ວນການຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດ ແມ່ນ 4,22%[6].

## ພາກທີ II
## ທິດທາງແຜນການໃນຕໍ່ໜ້າ

### I. ວຽກງານການເມືອງແນວຄິດ

ສືບຕໍ່ນຳພາການເມືອງ-ແນວຄິດຂອງພະນັກງານໃຫ້ມີຄວາມສະຫງົບ ແລະ ເຊື່ອມຊຶມບັນດາແນວທາງຂອງພັກ-ລັດ, ຈັດຕັ້ງເຜີຍແຜ່ເອກະສານຕ່າງໆ ທີ່ຂັ້ນເທິງໄດ້ມອບໝາຍໃຫ້ພະນັກງານໄດ້ເຊື່ອມຊຶມ ແລະ ຈັດຕັ້ງຜັນຂະຫຍາຍເຂົ້າໃນວຽກງານຂອງຕົນ, ຊຸກຍູ້ສົ່ງເສີມໃຫ້ພະນັກງານເພີ່ມຄວາມເປັນເຈົ້າການໃນການປະຕິບັດໜ້າທີ່ວຽກງານຂອງຕົນດ້ວຍຄວາມຮັບຜິດຊອບສູງ, ຍົກສູງຄວາມສາມັກຄີພາຍໃນ ແລະ ພາຍນອກເປັນຢ່າງດີ.

### II. ວຽກງານວິຊາສະເພາະ

- ສືບຕໍ່ດຳເນີນນະໂຍບາຍເງິນຕາ ແລະ ອັດຕາແລກປ່ຽນດັ່ງທີ່ໄດ້ກຳນົດໄວ້ໃນແຜນງານປະຈຳປີ ເພື່ອຮັກສາສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ; ຄົ້ນຄວ້າສ້າງແບບຈຳລອງເສດຖະກິດມະຫາພາກ ແລະ ອັດຕາແລກປ່ຽນ; ຊຸກຍູ້ການເຄື່ອນໄຫວຕະຫຼາດລະຫວ່າງທະນາຄານ; ສືບຕໍ່ຕິດຕາມສະພາບອັດຕາເງິນເຟີ້ ແລະ ຄວບຄຸມປັດໃຈຕ່າງໆ ທີ່ຈະກະທົບໃຫ້ເກີດເງິນເຟີ້; ເອົາໃຈໃສ່ບໍລິຫານຄັງສຳຮອງເງິນຕາຕ່າງປະເທດໃຫ້ມີປະສິດທິຜົນ;
- ສືບຕໍ່ຄຸ້ມຄອງເງິນຕາຕ່າງປະເທດ, ສົ່ງເສີມການນຳໃຊ້ເງິນກີບ ແລະ ການຊຳລະໂດຍບໍ່ໃຊ້ເງິນສົດໂດຍໃນເດືອນຕໍ່ໄປຈະສືບຕໍ່ລົງກວດກາຕິດຕາມສະພາບການຕິດລາຄາສິນຄ້າ ແລະ ບໍລິການຂອງບັນດາຕະຫຼາດ, ຫ້າງຮ້ານພາຍໃນນະຄອນຫຼວງວຽງຈັນ;
- ຊຸກຍູ້ບັນດາທະນາຄານທຸລະກິດເພີ່ມທະວີການລະດົມເງິນຝາກດ້ວຍຫຼາຍຮູບຫຼາຍສີ ໂດຍສະເພາະເງິນຝາກໄລຍະຍາວ ດ້ວຍການອອກພັນທະບັດ, ໃບຢັ້ງຢືນເງິນຝາກ, ສະຫຼາກປະຢັດ ແລະ ຮູບການອື່ນໆ ທີ່ເໝາະສົມສອດຄ່ອງກັບຄວາມຕ້ອງການຕົວຈິງຂອງສັງຄົມ ໄປຄຽງຄູ່ກັບການປັບປຸງການບໍລິການຂອງຕົນໃຫ້ມີຄວາມສະດວກວ່ອງໄວ ແລະ ທັນໄປສູ່ຄວາມເປັນທັນສະໄໝເທື່ອລະກ້າວ. ຊຸກຍູ້ການປັບອັດຕາດອກເບ້ຍໃຫ້ສອດຄ່ອງກັບສະພາບການພາຍໃນ ແລະ ສາກົນ. ພ້ອມທັງ ສືບຕໍ່ຄົ້ນຄວ້າປັບປຸງນະໂຍບາຍ, ກົນໄກການຄຸ້ມຄອງສິນເຊື່ອຂອງລະບົບທະນາຄານ ແລະ ສະຖາບັນການເງິນ ເພື່ອສ້າງເງື່ອນໄຂໃຫ້ນຳໃຊ້ທຶນຮອນໄດ້ຢ່າງເຕັມສ່ວນ; ເພີ່ມທະວີການຕິດຕາມກວດກາການເຄື່ອນໄຫວສິນເຊື່ອ ຂອງສະຖາບັນການເງິນອື່ນໆ ລວມທັງສະຖາບັນການເງິນຈຸລະພາກ, ສະຫະກອນສິນເຊື່ອໃຫ້ຖືກຕ້ອງຕາມລະບຽບການ; ຕິດຕາມການນຳໃຊ້ສິນເຊື່ອຢ່າງໃກ້ຊິດ ແລະ ການປັບປຸງໂຄງສ້າງໜີ້ໃຫ້ແທດເໝາະ ເພື່ອຮັບປະກັນບໍ່ໃຫ້ເກີດໜີ້ບໍ່ເກີດດອກອອກຜົນເກີນ 3%;
- **ວຽກງານຄຸ້ມຄອງທະນາຄານທຸລະກິດ ແລະ ສະຖາບັນການເງິນ:** ສືບຕໍ່ຕິດຕາມການຈັດຕັ້ງປະຕິບັດເງື່ອນໄຂເພີ່ມເຕີມຂອງທະນາຄານ ເອຊີລີດາ ຈຳກັດ ກ່ຽວກັບການສະເໜີຂໍອະນຸຍາດຍົກລະດັບໜ່ວຍບໍລິການຫຼວງພະບາງ ຂຶ້ນເປັນສາຂາ, ທະນາຄານ ເອສທີ ຈຳກັດ ກ່ຽວກັບການຂໍສ້າງຕັ້ງສາຂາບໍ່ແກ້ວ, ທະນາຄານ ລາວຈີນ ຈຳກັດ ກ່ຽວກັບການສະເໜີຂໍອະນຸຍາດສ້າງຕັ້ງສາຂາບໍ່ເຕັນ ແຂວງຫຼວງນ້ຳທາ, ທະນາຄານ ອາເຮັສບີ ກ່ຽວກັບການຂໍສ້າງຕັ້ງ ສາຂານະຄອນຫຼວງ

[6] ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກຳນົດ.

ວຽງຈັນ, ທະນາຄານ ຫວຽດຕິນ ລາວ ຈຳກັດ ກ່ຽວກັບການຂໍຍົກລະດັບໜ່ວຍບໍລິການຈຳປາສັກ ຂຶ້ນເປັນສາຂາ ແລະ ທະນາຄານໄຊງ່ອນເທືອງຕິນ ລາວ ຈຳກັດ ກ່ຽວກັບການສະເໜີຂໍຍົກລະດັບໜ່ວຍຈຳປາສັກ ຂຶ້ນເປັນສາຂາ; ສືບຕໍ່ສັງລວມ ແລະ ກວດກາ ການຮັກສາລະດັບຖານະເງິນຕາຕ່າງປະເທດຂອງບັນດາທະນາຄານທຸລະກິດ;

ຄົ້ນຄວ້າລົງເລິກເນື້ອໃນຂອງຫຼັກການ ບາເຊວ 2, ວິທີປະຕິບັດ ແລະ ບົດຮຽນຂອງສາກົນ ເພື່ອເປັນແນວທາງໃນການຄົ້ນຄວ້າ ແລະ ຈັດຕັ້ງປະຕິບັດ ແລະ ສືບຕໍ່ເຮັດວຽກກັບບໍລິສັດ ເອີນແອນຢັງ ລາວ ຈຳກັດ ໃນການສ້າງແຜນຈັດຕັ້ງປະຕິບັດ ຫຼັກການບາເຊວ 2;

- **ວຽກງານສ້າງ ແລະ ປັບປຸງນິຕິກຳ:** ສືບຕໍ່ປັບປຸງຮ່າງດຳລັດວ່າດ້ວຍໂຮງຊວດຈຳ ຕາມມະຕິຂອງກອງປະຊຸມລັດຖະບານ ປະຈຳເດືອນ 2/2016, ຄົ້ນຄວ້າຮ່າງດຳລັດວ່າດ້ວຍການປົກປ້ອງຜູ້ບໍລິໂພກທາງການເງິນ, ຄົ້ນຄວ້າຮ່າງຂໍ້ຕົກລົງວ່າດ້ວຍການບໍລິຫານຊັບສິນຂອງທະນາຄານທຸລະກິດ, ປັບປຸງຮ່າງຂໍ້ຕົກລົງວ່າດ້ວຍການບໍລິການຜະລິດຕະພັນທາງການເງິນ, ຮ່າງລະບຽບວ່າດ້ວຍສະພາບໍລິຫານຂອງບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ, ຮ່າງລະບຽບວ່າດ້ວຍການອອກຈຳໜ່າຍຮຸ້ນກູ້ຢູ່ຕ່າງປະເທດ ຂອງບໍລິສັດພາຍໃນ ສປປ ລາວ, ຮ່າງລະບຽບວ່າດ້ວຍການໂອນຮຸ້ນຈົດທະບຽນໃນຕະຫຼາດຫຼັກຊັບ ແລະ ຮ່າງລະບຽບວ່າດ້ວຍການບັນຊີ ແລະ ກວດສອບ ກ່ຽວກັບວຽກງານຫຼັກຊັບ; ກະກຽມສະເໜີກະຊວງຍຸຕິທຳກວດກາຄວາມສອດຄ່ອງດ້ານກົດໝາຍ ກ່ຽວກັບຮ່າງດຳລັດວ່າດ້ວຍການປົກປ້ອງເງິນຝາກ;
- ກະກຽມການເປັນເຈົ້າພາບ, ປະທານກອງປະຊຸມອາຊຽນ ແລະ ອາຊຽນ+3 ຂະແໜງການທະນາຄານ ປີ 2016;
- ຕິດຕາມການກະກຽມຫັນບໍລິສັດ ຊີມັງລາວ ເປັນບໍລິສັດມະຫາຊົນ ເພື່ອອອກຮຸ້ນຄັ້ງທຳອິດ ແລະ ຈົດທະບຽນໃນຕະຫຼາດຫຼັກຊັບລາວ;
- ສືບຕໍ່ແຜນການລົງໄປຕິດຕັ້ງໂປຣແກຣມການເຄື່ອນໄຫວບັນຊີ ຫຼື CBs Account statement online ຂອງທະນາຄານທຸລະກິດ ຢູ່ທະນາຄານແຫ່ງ ສປປ ລາວ;
- ກະກຽມຄວາມພ້ອມໃນການຈັດກອງປະຊຸມສະໄໝສາມັນ ຄັ້ງທີ 1 ປະຈຳປີ 2016 ຂອງຄະນະກຳມະການແຫ່ງຊາດ ເພື່ອຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ;
- ສືບຕໍ່ຄົ້ນຄວ້າ ແລະ ທົດລອງນຳໃຊ້ລະບົບໂປຣແກຣມການລາຍງານທຸລະກຳທີ່ໜ້າສົງໄສວ່າເປັນການຟອກເງິນ (STR Online);
- ສືບຕໍ່ລາຍງານທຸລະກຳທີ່ມີລັກສະນະພາໃຫ້ສົງໄສວ່າເປັນການຟອກເງິນ ຈາກທະນາຄານທຸລະກິດ ເພື່ອວິເຄາະ ແລະ ລາຍງານຕໍ່ເຈົ້າໜ້າທີ່ສືບສວນ-ສອບສວນ;
- ສືບຕໍ່ເສີມຂະຫຍາຍສາຍພົວພັນຮ່ວມມືກັບສາກົນຜ່ານການຮ່ວມມືສອງຝ່າຍ, ຫຼາຍຝ່າຍ ແລະ ຮ່ວມມືກັບຂົງເຂດພາກພື້ນຢ່າງກວ້າງຂວາງ ແລະ ຮອບດ້ານ;
- ສືບຕໍ່ວຽກງານປ້ອງກັນເວນຍາມອາຄານສຳນັກງານໃຫ້ມີຄວາມສະຫງົບປອດໄພ.

ຜູ້ວ່າການທະນາຄານແຫ່ງ ສປປ ລາວ

ດຣ ສົມພາວ ໄຟສິດ